## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 23ພຶສຈິກາ2008 (11-23-2008)

---

## ຫົວໃຈຂອງຄຣິສຕະຈັກທີ່ເຂັ້ມແຂງ:

**ຂໍ້ພຣະຄັມພີໃນບົດຮຽນ**: (ໂຣມ 14:1,10-13, 19-21; 15:1-6)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ທ່ານໂປໂລມີຄວາມເປັນຫ່ວງຕໍ່ຄວາມຖືກຕ້ອງປອງດອງກັນ ໃນຄຣິສຕະຈັກທີ່ກຸງໂຣມ ອາດເກີດມີຄວາມແຕກແຍກກັນ ຖ້າຫາກມີຜູ້ມີຄວາມເຊື່ອທີ່ເຂັ້ມແຂງບໍ່ອົດທົນຕໍ່ຜູ້ທີ່ຍັງອ່ອນໃນຄວາມເຊື່ອ. ຈຸດສົນໃຈໃນບົດຮຽນນີ້ ແມ່ນຢູ່ໃນຄຳສອນຂອງທ່ານໂປໂລ ກ່ຽວກັບການທີ່ຈະເຮັດຢ່າງໃດບັນດາຜູ້ທີ່ເຊື່ອຈະມີຄວາມສາມາດປັບປຸງຄຣິສຕະຈັກຂອງຕົນໃຫ້ເຂັ້ມແຂງຝ່າຍຈິດວິນຍານ ຊຶ່ງມີການຖົກຖຽງກັນໃນເຣື່ອງຂອງຄວາມເຊື່ອທີ່ແຕກຕ່າງກັນ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:**

ມີສະມາຊິກໂບດຫລາຍຄົນໄດ້ນຳເອົາເຣື່ອງມາຖົກຖຽງ ແລະຕໍ່ສູ້ກັນເອງ. ມີຈຳພວກນຶ່ງກໍໄດ້ແຍກອອກເປັນໝວດໝູ່ມັກຈະສ້າງບັນຫາໃຫ້ແກ່ຄຣິສຕະຈັກ "ການຖົກຖຽງກັນ" ຍິ່ງໄປກວ່ານັ້ນຄວາມເຂັ້ມແຂງນັ້ນແມ່ນການເຫັນແກ່ຕົວ ແລະການໂຕ້ຖຽງກັນເຖິງເຣື່ອງລາວຈະມີຄວາມສຳຄັນ ຫລືບໍ່ສຳຄັນ. ບົດຮຽນນີ້ໄດ້ຈັດຫາແນວຄວາມຄິດທີ່ຈະເຮັດໃຫ້ມີການເສີມສ້າງ ແລະປັບປຸງຄຣິສຕະຈັກໃຫ້ເຂັ້ມແຂງໃນຄວາມເຊື່ອ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ສາມາດຊ່ອຍໃຫ້ທ່ານມີຄວາມແນ່ໃຈໃນຄວາມຄິດເຫັນຂອງທ່ານເຂົ້າໃນການເສີມສ້າງຄຣິສຕະຈັກຂອງທ່ານໃຫ້ເຂັ້ມແຂງ ແລະມີຄວາມສາມັກຄີປອງດອງກັນດີຂຶ້ນ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ
6. ໃຫ້ນັກຮຽນເວົ້າຄຳພະຍານຈາກປະສົບການໃນອາທິດທີ່ຜ່ານມາສັ້ນໆ.
7. ໃນເມື່ອຖາມຄົນໃນສັງຄົມວັທນະທັມໃນສມັຍນີ້ ສ່ວຍຫລາຍເຂົາຕອບວ່າແນວໃດ? ດ້ວຍເຫດຜົນອັນໃດທີ່ສາມາດໃຫ້ເຂົ້າໄປໃນສວັນໄດ້?

**ແນະນຳ**: ສເນີໃຫ້ນັກຮຽນເວົ້າເຖິງແຕ່ລະຍຸກແຕ່ລະສມັຍໃນໂບດຂອງທ່ານນັ້ນໄດ້ສເນີໃຫ້ຮ່າງກາຍແນວໃດ.

( ຄົນໜຸ່ມ ຄົນແກ່ ເດັກນ້ອຍມີຊີວິດ ມີພລັງປະສົບການ ແລະອື່ນ ໆແນວໃດ?) ທ່ານຄິດວ່າພຣະເຈົ້າໃຫ້ຈຸດມຸ້ງໝາຍ ໃຫ້ຈະເຣີນຂຶ້ນແຕ່ລະສມັຍຢ່າງດຽວກັນບໍ່?

**1. <u>ຍອມຮັບຊຶ່ງກັນ ແລະກັນ:</u>** (ໂຣມ 14:1, 10-12)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 14:1, 10-12
- ໃຊ້ປື້ມອະທິບາຍພຣະຄັມພີໃນໜ້ານີ້ ເພື່ອສລຸບ ໃນ ຂໍ້ (1) ທີ່ວ່າ "ອ່ອນໃນຄວາມເຊື່ອ" ພວກເຮົາບາງຄົນ ອາຈເຊື່ອໄວ, ມີປະຫວັດເບື້ອງຫລັງແຕກຕ່າງກັນ ມີຄວາມເຊື່ອນ້ອຍ ແລະບໍ່ໄດ້ເຮັດຫຍັງ ຫລືບໍ່ໄດ້ເວົ້າ ເໝືອນພວກເຮົາ. ຄຣິສຕຽນທີ່ອ່ອນແອ ແມ່ນຜູ້ນຶ່ງທີ່ຕິດພັນຢູ່ກັບບັນຫາ ເສຣີຂອງການມີຄວາມຮັບຜິດ ຊອບຊົ່ວດີ.
- ບົດສົນທະນາ: ເປັນຫຍັງໂບດມັກຫຸ້ມຫໍ່ດ້ວຍວັດຖຸ ການມອບກາຍຖວາຍຕົວແດ່ພຣະເຈົ້ານັ້ນຖືວ່າບໍ່ສຳຄັນ ທ່ານໂປໂລໄດ້ຂຽນໄວ້ວ່າ: "ພວກເຮົາທຸກຄົນຕ້ອງຢືນຢູ່ຕໍ່ໜ້າບັນລັງງພິພາກສາຂອງພຣະເຈົ້າ (ຂໍ້ 10)
- ຊຶ່ງບໍ່ກ່ຽວກັບວ່າພວກເຮົາໄດ້ຮັບຄວາມລອດພົ້ນແລ້ວກໍຕາມ ແຕ່ພຣະເຈົ້າຈະເປັນຜູ້ຕັດສິນຕາມມາຕະຖານ ຂອງພຣະຄຣິດ. ພຣະເຈົ້າຈະສຳຣວດເບິ່ງຊີວິດຂອງທ່ານໄດ້ຢ່າງໃດ? ໃນຂໍ້ທີ 10 ວ່າເປັນຫຍັງທ່ານຈຶ່ງ ໝິ່ນປມາດອ້າຍນ້ອງຂອງທ່ານ? ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຕອບໄດ້ທຸກຢ່າງ.

  ໃນຖານະພວກເຮົ້າເປັນຜູ້ທີ່ເຊື່ອ ພວກເຮົາເປັນຄົນມີສະຕິປັນຍາ ບາງຄັ້ງພວກເຮົາຕ້ອງຢືນຕໍ່ສູ້ກັບສິ່ງ ທີ່ຕໍ່ສູ້ຂັດຂືນພຣະເຈົ້າ ຫລືໂບດ. ມີຫລາຍຢ່າງ ຫລາຍປະເດັນກໍຍາກຕໍ່ຄວາມຮູ້ສຶກຂອງຜູ້ທີ່ເຊື່ອທັງຫລາຍ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ໂຣມ 14:1, 10-12)

1. ຕາມການບັນທຶກໄວ້ໃນຂໍ້ 12 ນັ້ນພວກເຮົາສົມຄວນຈະມີຄວາມສົນໃຈໃນເຣື່ອງຄົນທີ່ຢູ່ຮອບຂ້າງເຮົາທີ່ປະ ຕິບັດຕໍ່ເຮົາ ຫລືຈະຕອບສນອງຕໍ່ເຂົາເຈົ້າແນວໃດ?
2. ໃນທາງໃດທີ່ຂໍ້ 12 ທີ່ບອກໃຫ້ທູນເຣື່ອງລາວຂອງເຮົາຕໍ່ພຣະເຈົ້າ,ບໍ່ຕ້ອງວິພາກວິຈານ ຫາຄວາມຜິດກັນ ແລະກັນ? ຖ້າພວກເຮົາຫາກຈິດຈໍ່ຢູ່ໃນຄວາມເມດຕາຂອງພຣະເຈົ້າ, ຄວາມຮັກ, ການພິພາກສາ, ແລ້ວເປັນ ຫຍັງພວກເຮົາຈຶ່ງບໍ່ມີຄວາມປາຖນາທີ່ຈະເອົາຜິດຊຶ່ງກັນ ແລະກັນ?
3. ໃຜທີ່ຊ່ອຍທ່ານດ້ວຍຄວາມຮັກໃນເມື່ອທ່ານມີຄວາມ "ອ່ອນແອທາງຄວາມເຊື່ອ"?

**2. <u>ເສີມສ້າງຊຶ່ງກັນ ແລະກັນ:</u>** (ໂຣມ 14:13,19-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 14:13, 19-21
- ພຣະທັມຕອນນີ້ໄດ້ອະທິບາຍເພີ້ມເຕີມໃນຫລາຍ ໆຈຸດທີ່ຜ່ານມາ, ເປັນການເຕືອນພວກເຮົາຊຶ່ງບໍ່ມີແຕ່ພຽງ ເທົ່ານັ້ນທີ່ພວກເຮົາຄວນຍອມຮັບຊຶ່ງກັນແລະກັນ, ແຕ່ພວກເຮົາຄວນເສີມສ້າງຊຶ່ງກັນແລະກັນດ້ວຍ.
- ຂໍໃຫ້ຜູ້ນຶ່ງແບ່ງປັນເວລາທີ່ລາວໄດ້ສະດຸດທາງຝ່າຍຮ່າງກາຍ.
- ໃຫ້ນັກຮຽນວາດພາບໃນໃຈເຖິງ "ກ້ອນຫີນທີ່ໃຫ້ຊຸນສະດຸດ" ສາມຢ່າງ ໃນການດຳຣົງຊີວິດຜ່ານມາ; ນີ້ເປັນ ການຊຸນສະດຸດຝ່າຍຈິດວິນຍານ, ໃຫ້ປຽບທຽບການຊຸນສະດຸດທາງຝ່າຍຮ່າງກາຍ ແລະຝ່າຍຈິດວິນຍານວ່າ ເປັນຄືແນວໃດ.
- ພວກເຮົາຄວນຈະເຮັດຢ່າງໃດເພື່ອຊ່ອຍຊຶ່ງກັນ ແລະກັນໃຫ້ຜູ້ທີ່ເຊື່ອໃໝ່ເຂັ້ມແຂງເພື່ອບໍ່ໃຫ້ເປັນການກໍ່ສ້າງທີ່ ຊູນສະດຸດ (ບາງເທື່ອການອະທິຖານກໍອາດຊ່ອຍຕອບຄຳຖາມເຂົາເຈົ້າໄດ້ ຫລືດ້ວຍການຜູກມິດສັມພັນກັບ

ເຂົາເຈົ້າໄດ້)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ໂຣມ 14:13, 17-21

1. ເມື່ອໃດໃນຊີວິດຂອງທ່ານທີ່ມີຜູ້ນຳທ່ານອອກຈາກການຈິດຈໍ່ຢູ່ໃນການວິພາກວິຈານ ແລະແມ່ນຫຍັງທີ່ເປັນສິ່ງສຳຄັນທີ່ສຸດ?
2. ໃນການຮ່ວມກັນແຕ່ລະຄັ້ງໃນໂບດຂອງທ່ານໃນການອະທິຖານ, ການຮັບໃຊ້ ແລະການສ້າງສາວົກໄດ້ຊ່ອຍຊຶ່ງກັນ ແລະກັນແນວໃດແດ່?
3. ເຮັດແນວໃດຈຶ່ງຈະຊ່ອຍໃຫ້ຜູ້ທີ່ເຊື່ອຄົນອື່ນ ໆ ໄດ້ຜ່ານພົ້ນຈາກການພິພາກສາໄດ້?
4. ແມ່ນຫຍັງອີກແດ່ທີ່ຈະເຮັດໃຫ້ອ້າຍ ເອື້ອຍນ້ອງໃນພຣະຄຣິດຊູນສະດຸດ?

3. **ເຮັດຕາມແບບຢ່າງຂອງພຣະຄຣິດ:** (ໂຣມ 15:1-6)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 15:1-6
- ໃຫ້ຂຽນປ້າຍນ້ອຍ 5 ອັນ, ໃສ່ໃນໝາກປູມເປົ້າທີ່ບໍ່ໄດ້ໃສ່ລົມເທື່ອ ຕາມຂໍ້ຄວາມລຸ່ມນີ້: ຂ້ອຍບໍ່ເຂົ້າໃຈຂໍ້ນີ້, ຂ້ອຍບໍ່ຮູ້ຈັກວ່າຈະອະທິຖານແນວໃດ, ຂ້ອຍບໍ່ມີເພື່ອນເປັນຄຣິສຕຽນ, ຂ້ອຍບໍ່ເຂົ້າໃຈວ່າໂບດຂອງຂ້ອຍເຮັດສິ່ງຈຳເປັນ, ແລະຂ້ອຍບໍ່ຮູ້ຈັກວ່າຈະແບ່ງປັນຄວາມເຊື່ອຂອງຂ້ອຍແນວໃດ.ເອົາໝາກປູມເປົ້າທັງ 5 ໜ່ວຍໃສ່ໃນແບ໊ກແພັກຂອງທ່ານ ແລ້ວເປ້ໃສ່ຫລັງຂອງທ່ານໄວ້. ແລ້ວເວົ້າວ່າຜູ້ທີ່ເຊື່ອໃໝ່ສາມາດພົບກັບຄວາມທຸກໃຈໄດ້ງ່າຍທີ່ສຸດ ແລະກໍມີຄວາມບໍ່ພໍໃຈໃນຕົວເຂົາເຈົ້າເອງ. ໃນຂໍ້ 1 ພວກເຮົາເຫັນວ່າ ພວກເຮົາຖືກຮຽກເອີ້ນມາໃຫ້ເປັນຜູ້ຊ່ອຍເສີມສ້າງຜູ້ທີ່ອ່ອນໃຫ້ເຂັ້ມແຂງຂຶ້ນ.
- ທ່ານຈະຊ່ອຍຖືໝາກປູມເປົ້າໃຫ້ຜູ້ທີ່ມີຄວາມທຸກໃຈນີ້ໄດ້ຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ໂຣມ 15:1-6

1. ແມ່ນຫຍັງທີ່ແຕກຕ່າງກັນລະຫວ່າງ ໂດຍຄວາມຈິງໃຈ, ຖືກໃຈເພື່ອນບ້ານຂອງທ່ານ ແລະການຍິນດີຂອງເພື່ອນບ້ານຂອງທ່ານ " ເພື່ອໃຫ້ລາວດີ,ສ້າງລາວຂຶ້ນ?
2. ໃນສ່ວນຕົວຂອງທ່ານໄດ້ຊ່ອຍຜູ້ທີ່ອ່ອນແອແນວໃດແດ່? ໃນຈຸດໃດທີ່ພຣະເຈົ້າອວຍພອນໃຫ້ທ່ານຊ່ອຍຄົນອື່ນທີ່ມີຄວາມອ່ອນແອຢູ່?
3. ໃນຂໍ້ພຣະທັມຕອນໃດທີ່ໄດ້ໜູນຈິດໃຈພວກເຮົາ (ຂໍ້ 4)? ການສຶກສາພຣະຄັມພີປະຈຳວັນໄດ້ຊ່ອຍໃຫ້ໂບດຂອງພວກເຮົາມີຄວາມຮ່ວມຈິດຮ່ວມໃຈກັນແນວໃດແດ່?

**ພຣະຄັມພີແຫ່ງຄວາມຈິງ**

- ບັນດາຜູ້ທີ່ເຊື່ອທີ່ມີຄວາມເຊື່ອເຂັ້ມແຂງຄວນຍອມຮັບຜູ້ທີ່ມີຄວາມເຊື່ອອ່ອນ ແລະຫລີກເວັ້ນການວິພາກວິຈານເຂົາເຈົ້າ.
- ເສີມສ້າງທຸກ ໆ ຄົນທີ່ເຊື່ອໃຫ້ມີຄວາມສຳຄັນເພີ້ມຂຶ້ນ.
- ຜູ້ທີ່ເຊື່ອທັງຫລາຍຕ້ອງຮຽນແບບພຣະຄຣິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**